

# ຄອບຄົວ ແລະ Child Outcome Summary (ບົດສະຫຼຸບຜົນໄດ້ຮັບຂອງເດັກ)

## ຂະບວນການຂອງ CHILD OUTCOME SUMMARY (ບົດສະຫຼຸບຜົນໄດ້ຮັບຂອງເດັກ)

### ຂະບວນການນີ້ເຮັດວຽກຄືແນວໃດ?

ຂະບວນການຂອງ Child Outcome Summary (ບົດສະຫຼຸບຜົນໄດ້ຮັບຂອງເດັກ, COS) ຖືກນໍາມາໃຊ້ເພື່ອເກັບກໍາຂໍ້ມູນກ່ຽວກັບຄວາມຄືບໜ້າທີ່ເດັກເຮັດໄດ້ໃນການແຊກແຊງຊ່ວຍເຫຼືອເບື້ອງຕົ້ນ. ພວກເຮົາຈະຮ່ວມກັນຄົ້ນຫາວ່າການພັດທະນາການດ້ານການເຮັດວຽກຂອງລູກຂອງທ່ານມີລັກສະນະເປັນແນວໃດ, ເມື່ອໃດທີ່ພວກເຂົາເລີ່ມຕົ້ນການບໍລິການແລະ ເມື່ອໃດທີ່ພວກເຂົາປ່ຽນແປງໄປ. ນີ້ສະແດງໃຫ້ເຫັນວ່າພວກເຂົາມີຄວາມກ້າວໜ້າຫຼາຍປານໃດ ໃນສາມດ້ານທີ່ສໍາຄັນ, ໃນຂະນະທີ່ຢູ່ໃນການບໍລິການການແຊກແຊງຊ່ວຍເຫຼືອເບື້ອງຕົ້ນ.

## ສາມດ້ານທີ່ສໍາຄັນ ແມ່ນມີຫຍັງແດ່?

### ຜົນໄດ້ຮັບທີ່ພວກເຮົາກໍາລັງຕິດຕາມ:

- ທັກສະທາງດ້ານສັງຄົມ-ອາລົມໃນທາງບວກ ແລະ ການພົວພັນທາງສັງຄົມ
- ການໄດ້ມາ ແລະ ການນໍາໃຊ້ຄວາມຮູ້ ແລະ ທັກສະຕ່າງໆ
- ໃຊ້ພຶດຕິກໍາທີ່ເໝາະສົມເພື່ອບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາ

## ຜູ້ຕັດສິນໃຈກ່ຽວກັບຄວາມຄືບໜ້າແມ່ນໃຜ?

### ການຕິດຕາມຄວາມຄືບໜ້າຂອງລູກຂອງທ່ານ.

ພວກເຮົາເຊື່ອວ່າ ທ່ານຮູ້ຈັກລູກຂອງທ່ານດີຍິ່ງກວ່າຄົນອື່ນໃດ. ທ່ານມີບົດບາດສໍາຄັນໃນທີມງານຂອງລູກຂອງທ່ານ, ໃນການກໍານົດວ່າລູກຂອງທ່ານມີຄວາມຄືບໜ້າຫຼາຍປານໃດ ໃນຂະນະທີ່ພວກເຂົາຢູ່ໃນການແຊກແຊງຊ່ວຍເຫຼືອເບື້ອງຕົ້ນ.

## ຍ້ອນຫຍັງທ່ານຈຶ່ງເກັບຂໍ້ມູນເຫຼົ່ານີ້?

### ຂໍ້ມູນຂອງລູກຂອງຂ້າພະເຈົ້າໄດ້ຮັບການປົກປ້ອງບໍ?

ພວກເຮົາເກັບກໍາຂໍ້ມູນຂອງເດັກທຸກຄົນໃນໂຄງການຂອງພວກເຮົາ. ທີມງານໂຄງການໃນທ້ອງຖິ່ນຂອງທ່ານພ້ອມທັງທີມງານ ESIT ຂອງລັດ ສາມາດເບິ່ງຂໍ້ມູນສ່ວນຕົວຂອງທ່ານໄດ້. ເມື່ອຈະມີການນໍາຂໍ້ມູນໄປໃຊ້ເກີນກວ່ານັ້ນ, ຈະບໍ່ມີການແບ່ງປັນຂໍ້ມູນທີ່ຈະສາມາດລະບຸຕົວໄດ້. ເບື້ອງຕົ້ນເຮັດວຽກໄດ້ດີປານໃດ ແລະ ໃຫ້ເຫັນວ່າວ່າມັນຄຸ້ມຄ່າກັບການລົງທຶນຊັບພະຍາກອນ ຫຼື ບໍ່.

Washington State Department of
CHILDREN, YOUTH & FAMILIES

# ເປົ້າໝາຍສຳຄັນດ້ານການພັດທະນາການ

*ວິທີການຕ່າງໆໃນການຊ່ວຍໃຫ້ລູກຂອງທ່ານເຕີບໂຕໃນດ້ານທີ່ສຳຄັນໃນ COS*



## ການພັດທະນາການພົວພັນທາງດ້ານສັງຄົມ-ອາລົມໃນທາງບວກ

**0-6 ເດືອນ:**

- ຍິ້ມໃຫ້ກັບຮອຍຍິ້ມ, ນ້ຳສຽງ ຫຼື ການສຳພັດ
- ຫົວສຽງດັງໆ ແລະ ມັກຫຼິ້ນ
- ສັງເກດເຫັນຄົນແປກໜ້າ

**6-12 ເດືອນ:**

- ຫຼິ້ນ peek-a-boo
- ສະແດງໃຫ້ເຫັນຄວາມມັກຂອງຫຼິ້ນອັນໃດໜຶ່ງຫຼາຍກວ່າອັນອື່ນໆ
- ຕອບສະໜອງຕາມອາລົມຂອງຜູ້ໃຫຍ່ໄດ້ຢ່າງເໝາະສົມ

**12-24 ເດືອນ:**

- ໃຫ້ຄວາມຮັກແພງ; ກອດກັບຄືນ ແລະ ຈູບ
- ໃຊ້ຄຳເວົ້າ ຫຼື ທ່າທາງເພື່ອຮຽກຮ້ອງຄວາມສົນໃຈຈາກຜູ້ອື່ນ
- ໃຫ້ຄວາມສົນໃຈກັບເດັກຄົນອື່ນໆ



## ການຮຽນຮູ້ທັກສະ ແລະ ຄວາມຮູ້ຕ່າງໆ

**0-6 ເດືອນ:**

- ການແນມເບິ່ງວັດຖຸ ຫຼື ຜູ້ຄົນ
- ຊອກຫາວັດຖຸທີ່ເຊື່ອງໄວ້ບາງສ່ວນ
- ເບິ່ງຂອງຫຼິ້ນໃນຂະນະທີ່ຖືໄວ້ໃນມື

**6-18 ເດືອນ:**

- ຫຼິ້ນເກມງ່າຍໆ ເຊັ່ນ: pat-a-cake
- ຊີ້ໄປຫາວັດຖຸໃດໜຶ່ງເມື່ອຮຽກເຖິງ

**12-24 ເດືອນ:**

- ຮັບຮູ້ຮູບຊົງຕ່າງໆໃນກະດານປິດສະໜາ
- ຮຽນແບບສຽງ, ຄຳສັບ ຫຼື ການເຄື່ອນໄຫວຂອງຮ່າງກາຍ
- ບອກຊື່ອົບຊີທັງຫ້າຂອງຮ່າງກາຍ



## ການນຳໃຊ້ພຶດຕິກຳທີ່ເໝາະສົມເພື່ອບັນລຸໄດ້ຕາມຄວາມຕ້ອງການຂອງພວກເຂົາ

**0-6 ເດືອນ:**

- ການຕອບສະໜອງຕໍ່ການຮຽກຊື່ຂອງຕົນເອງ
- ຢຸດຮ້ອງໄຫ້ເມື່ອລົມກັບ
- ຫັນຫົວໄປຍັງຫົວນົມເມື່ອສະເໜີໃຫ້

**6-12 ເດືອນ:**

- ໃຊ້ຄຳສັບຄຳທຳອິດໄດ້ຖືກຕ້ອງ
- ການແຕະຜູ້ໃຫຍ່ ຫຼື ວັດຖຸເພື່ອເຮັດໃຫ້ມີການກະທຳ
- ໃຊ້ຄຳສະແດງທ່າທາງ ເຊັ່ນ: ການແກວ່ງຫົວວ່າ “ບໍ່”

**12-24 ເດືອນ:**

- ພະຍາຍາມຄິດວ່າຂອງຫຼິ້ນເຮັດວຽກແນວໃດ
- ຍ່າງຄົນດຽວ ແລະ ສາມາດຂຶ້ນຂັ້ນໄດໄດ້
- ປີນເກົ້າອີ້ເພື່ອເອົາບາງສິ່ງບາງຢ່າງທີ່ຢື້ບໍ່ເຖິງ
- ຕັດສິນໃຈບາງຢ່າງ ເຊັ່ນ: ສິ່ງທີ່ຈະກິນ ຫຼື ສິ່ງທີ່ຈະໃສ່

## ລະບຸບາງສິ່ງບາງຢ່າງທີ່ລູກຂອງທ່ານສາມາດເຮັດໄດ້

........................................

........................................

........................................

........................................

........................................

........................................

*ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ ໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຝ່າຍປະຊາສຳພັນຂອງສະຖາບັນຂອງ DCYF) (1-800-723-4831 | 360-902-8060, **ConstRelations@dcyf.wa.gov**).*

DCYF PUBLICATION FS_0025 LA (12-2019) Laotian